ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ
ກົມການນຳເຂົ້າ ແລະ ສົ່ງອອກ

ເລກທີ 3749/ກຂອ.ບຂອ
ນະຄອນຫຼວງວຽງຈັນ, ວັນທີ 15 ສິງຫາ 2018

## ແຈ້ງການ

ເຖິງ: ບັນດາຂະແໜງການທີ່ກ່ຽວຂ້ອງ ທັງພາກລັດ ແລະ ພາກທຸລະກິດ.

ເລື່ອງ: ລົບລ້າງໃບອະນຸຍາດສົ່ງອອກເພັດທຍາບ (ໃບຂາວ) ແລະ ປັບປຸງຄະນະລົງກວດກາການນຳເຂົ້າ ແລະ ສົ່ງອອກເພັດທຍາບ.

- ອີງຕາມ ຄຳສັ່ງ ຂອງທ່ານນາຍົກລັດຖະມົນຕີ ສະບັບເລກທີ 02/ນຍ, ລົງວັນທີ 01 ກຸມພາ 2018 ວ່າດ້ວຍການປັບປຸງລະບຽບການ ແລະ ກົນໄກປະສານງານໃນການດຳເນີນທຸລະກິດ ຢູ່ ສປປ ລາວ.
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການນຳເຂົ້າ ແລະ ສົ່ງອອກເພັດທຍາບ ສະບັບເລກທີ 0224/ອຄ.ກຂອ, ລົງວັນທີ 08 ກຸມພາ 2018.
- ອີງຕາມ ບົດບັນທຶກກອງປະຊຸມ ຄັ້ງວັນທີ 05 ມີນາ 2018.

ເພື່ອເປັນການຫຼຸດຜ່ອນຂັ້ນຕອນ, ເວລາ ໃນການປະກອບເອກະສານການນຳເຂົ້າ ແລະ ສົ່ງອອກສິນຄ້າໃຫ້ມີຄວາມສະດວກ ແລະ ສອດຄ່ອງກັບ ຄຳສັ່ງ ຂອງທ່ານນາຍົກລັດຖະມົນຕີ ສະບັບເລກທີ 02/ນຍ, ລົງວັນທີ 01 ກຸມພາ 2018 ທັງນີ້, ກໍ່ເພື່ອສ້າງສະພາບແວດລ້ອມທີ່ອຳນວຍຄວາມສະດວກທາງດ້ານການຄ້າ ແລະ ການລົງທຶນ ດ້ວຍການປັບປຸງຂັ້ນຂອດບໍລິຫານຂອງພາກລັດໃຫ້ມີຄວາມກະທັດຮັດ ແລະ ວ່ອງໄວ.

ກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກຳ ແລະ ການຄ້າ ອອກແຈ້ງການ:

1. ລົບລ້າງການອອກໃບອະນຸຍາດ ສົ່ງອອກເພັດທຍາບ (ໃບຂາວຕາມເອກະການສານຊ້ອນທ້າຍທີ 01) ໂດຍໃຫ້ນຳໃຊ້ໃບຢັ້ງຢືນແຫຼ່ງທີ່ມາຂອງເພັດທຍາບແທນ (ໃບຢັ້ງຢືນ Kimberley Process Certificate KPC ເປັນໃບແຂງ) ຕາມເອກະສານຊ້ອນທ້າຍທີ 02;
2. ໃບຢັ້ງຢືນ KPC ສຳລັບການສົ່ງອອກເພັດທຍາບ ປະກອບມີ 03 ສະບັບຄື: ຕົ້ນສະບັບຈະເປັນໃບແຂງ 01 ສະບັບ (ເພື່ອຄັດຕິດກັບເພັດທຍາບທີ່ມີການສົ່ງອອກ) ແລະ ສຳເນົາ 02 ສະບັບ (ກົມການນຳເຂົ້າ ແລະ ສົ່ງອອກ 01 ສະບັບ ແລະ ພາກທຸລະກິດ 01 ສະບັບ);
3. ການນຳເຂົ້າ ຫຼື ສົ່ງອອກເພັດທຍາບ ແລະ ເພັດທີ່ເຈຍລະໄນແລ້ວ ທຸກຄັ້ງຕ້ອງມີຄະນະກຳມະການກວດກາ ຊຶ່ງປະກອບມີຜູ້ຕາງໜ້າຈາກກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກຳ ແລະ ການຄ້າ ແລະ ກົມພາສີ, ກະຊວງການເງິນ. ເພື່ອຕິດຕາມກວດກາເພັດທີ່ຈະມີການນຳເຂົ້າ ຫຼື ສົ່ງອອກຕົວຈິງ ພ້ອມທັງເຮັດບົດບັນທຶກລົງກວດກາທຸກຄັ້ງ;
4. ແຈ້ງການສະບັບນີ້ ມີຜົນສັກສິດນັບແຕ່ວັນທີ 01 ກັນຍາ 2018 ເປັນຕົ້ນໄປ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ./-

ຫົວໜ້າກົມ.

ສຸລິຍົນ ພິລາວົງ

ບ່ອນສົ່ງ:
- ກົມພາສີ, ກົມສ່ວຍສາອາກອນ, ກະຊວງການເງິນ ເພື່ອຊາບ
- ກົມຕຳຫຼວດເສດຖະກິດ, ກະຊວງປ້ອງກັນຄວາມສະຫງົບ ເພື່ອຊາບ
- ສະພາອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ ເພື່ອແຈ້ງໃຫ້ນັກທຸລະກິດຊາບ